ບົດສະຫຼຸບ

# ຄຳແນະນຳ ແບບສະໝັກໃຈ ສຳລັບການຮັກສາການປະມົງ ຂະໜາດນ້ອຍແບບຍືນຍົງ ໃນສະພາບການແຫ່ງການຮັບ ປະກັນສະບຽງອາຫານ ແລະ ການລົບລ້າງ ຄວາມທຸກຍາກ



ຈັດພິມໂດຍ:

ກຸ່ມສາກົນ ສຳລັບການສະໜັບສະໜູນຊາວປະມົງ
(International Collective in Support of Fishworkers, (ICSF)
27 College Road Chennai 600 006,
ປະເທດອິນເດຍ (India)

Phone: (91) 44–2827 5303
Fax: (91) 44–2825 4457
Email: icsf@icsf.net
Website: www.icsf.net

ICSF ເປັນອົງການທີ່ບໍ່ສັງກັດລັດຖະບານ ຊຶ່ງເຮັດວຽກກ່ຽວກັບບັນຫາ
ທີ່ກ່ຽວຂ້ອງກັບຊາວປະມົງ ໃນທົ່ວໂລກ. ອົງການນີ້ ມີຖານະຕຳແໜ່ງ
ໃນສະພາເສດຖະກິດ-ສັງຄົມ ຂອງອົງການສະຫະປະຊາຊາດ ແລະ
ຢູ່ໃນບັນຊີລາຍຊື່ພິເສດ ຂອງ ILO ກ່ຽວກັບອົງການທີ່ບໍ່ສັງກັດລັດຖະບານ
ສາກົນ. ນອກນີ້ ຍັງເປັນອົງການທີ່ມີຖານະສາຍສຳພັນ ກັບ FAO.
ດັ່ງເປັນເຄືອຂ່າຍທົ່ວໂລກ ຂອງຜູ້ຈັດຕັ້ງຊຸມຊົນ, ຄູ, ວິຊາການ,
ນັກຄົ້ນຄວ້າ ແລະ ນັກວິທະຍາສາດ, ກິດຈະກຳ ຂອງ ICSF
ປະກອບມີການຕິດຕາມກວດກາ ແລະ ການຄົ້ນຄວ້າ, ການແລກປ່ຽນ
ແລະ ການຝຶກອົບ ຮົມ, ການໂຄສະນາເຜີຍແຜ່ ແລະ ການດຳເນີນການ,
ພ້ອມດຽວກັນກັບຊຸມຊົນ.

# ຄຳແນະນຳ
# ແບບສະໝັກໃຈ
# ສຳລັບການຮັກສາ
# ການປະມົງຂະໜາດນ້ອຍ
# ໃຫ້ຍືນຍົງໃນສະພາບ
# ການແຫ່ງການຮັບ
# ປະກັນສະບຽງອາຫານ
# ແລະ ການລົບລ້າງ
# ຄວາມທຸກຍາກ

ຄຳແນະນຳແບບສະໝັກໃຈ ສຳລັບການຮັກສາການປະມົງຂະໜາດນ້ອຍໃຫ້ຍືນຍົງ ໃນສະພາບການແຫ່ງການຮັບປະກັນສະບຽງອາຫານ ແລະ ການລຶບລ້າງຄວາມທຸກຍາກ (ຄຳແນະນຳ SSF) ໄດ້ຖືກຮັບຮອງ ໂດຍປະເທດສະມາຊິກ ຂອງອົງການອາຫານ ແລະ ການກະເສດ ຂອງສະຫະປະຊາຊາດ (Food and Agriculture Organization of the United Nations, FAO) ແລະ ໄດ້ຮັບການຮັບຮອງຢ່າງເປັນທາງການ ເປັນເຄື່ອງມືສາກົນ ໃນເດືອນມິຖຸນາ 2014.

ສິ່ງທີ່ພິເສດທີ່ສຸດ ກ່ຽວກັບຄຳແນະນຳ SSF ນີ້ ມີຄື: ມັນຖືກສ້າງຂຶ້ນໂດຍເປັນຜົນມາຈາກປະຫວັດການຕໍ່ສູ້ ຂອງຊາວປະມົງຂະໜາດນ້ອຍ ທີ່ຍາວນານໃນທົ່ວໂລກ ໃນການສ້າງຄວາມສົນໃຈເຮັດໃຫ້ ສະຖານະພາບ ແລະ ພາລະບົດບາດຂອງຊາວປະມົງຂະໜາດນ້ອຍ ຖືກຮັບຮູ້ຫຼາຍຂຶ້ນກວ່າເກົ່າ ໃນຂະແໜງການປະມົງ ຂອງປະເທດຕົນ.

ເຖິງວ່າ, ໃນທົ່ວໂລກ, ຊາວປະມົງຂະໜາດນ້ອຍ ປະກອບເປັນກະດູກສັນຫຼັງຂອງເສດຖະກິດດ້ານການປະມົງ, ເຂົາເຈົ້າກໍ່ມັກຖືກປ່ອຍປະລະເລີຍ ແລະ ສ່ວນໃຫຍ່ກໍ່ຖືກແບ່ງແຍກອອກຈາກຂະບວນການການສ້າງຂະແໜງ ການປະມົງເປັນທັນສະໄໝ. ເຖິງວ່າມີການລະເລີຍດັ່ງກ່າວ, ຂະແໜງການນີ້ ກໍ່ຍັງຢູ່ລອດ ແລະ ມີຊີວິດຊີວາໃນຫຼາຍໆປະເທດ.

ເຖິງຢ່າງໃດກໍ່ດີ, ເນື່ອງຈາກຜົນການ “ລະເລີຍຢ່າງເປັນທາງການ” ເປັນຫຼາຍທົດສະວັດ, ໃນຫຼາຍໆປະເທດ, ຊຸມຊົນຊາວປະມົງຂະໜາດນ້ອຍ, ແມ່ນວ່າພວກເຂົາປະກອບເປັນພູດສ່ວນທີ່ໃຫຍ່ທີ່ສຸດໃນການຫາປາ, ກໍ່ຍັງສືບຕໍ່ທຸກຍາກ ແລະ ຖືກເຮັດໃຫ້ດ້ອຍຄ່າ ແລະ ຂາດສິດທິມະນຸດ ສຳລັບການພັດທະນາທາງດ້ານເສດຖະກິດ-ສັງຄົມ ແລະ ວັດທະນາທຳ.

ຄຳແນະນຳ SSF ເປັນທັງການຮັບຮູ້ຄວາມເປັນຈິງ ໂດຍປະເທດສະມາຊິກ ອົງການ FAO, ແລະ ໃນຂະນະດຽວກັນ, ກໍ່ເປັນການມຸ້ງໝັ້ນນຳເອົາການປະມົງຂະໜາດນ້ອຍກັບຄືນມາເປັນຈຸດສຸມ ຂອງການພັດທະນາ ແລະ ຄຸ້ມຄອງການປະມົງ.

ກຸ່ມສາກົນເພື່ອການສະໜັບສະໜູນຊາວປະມົງ (ICSF) ເຄີຍເປັນໜຶ່ງໃນອົງການນຳໜ້າຂອງສັງຄົມພົນລະເຮືອນ (CSO) ທີ່ເປັນປະໂຫຍດໃນການສ້າງຄຳແນະນຳຂອງຂະບວນການທີ່ມີສ່ວນຮ່ວມທີ່ສຸດ. ຕາມຄວາມເປັນຈິງ, ອົງການ FAO/UN ໄດ້ທຸ້ມເທຕໍ່ຄຳແນະນຳເຫຼົ່ານີ້ ເພື່ອຄວາມຊົງຈຳຂອງ ຈັນດຣິກາ ຊາຣມາ (Chandrika Sharma)

ເລຂາທິການ ຂອງກຸ່ມ ICSF, ຜູ້ທີ່ເປັນຜູ້ນຳໜ້າຕໍ່ສູ້ ເພື່ອສິດທິຂອງຊາວປະມົງຂະໜາດນ້ອຍ ໃນທົ່ວໂລກ, ໄດ້ສູນຫາຍໄປ ນັບແຕ່ຖ້ຽວບິນ MH 370 ຂອງສາຍການບິນມາເລເຊຍສູນຫາຍໄປ ໃນເດືອນມີນາ 2014; ທ່ານ ນາງ ເປັນຜູ້ກຳລັງເດີນທາງໄປມົງໂກລີ ເພື່ອເຂົ້າຮ່ວມກອງປະຊຸມວິຊາການ ຂອງອົງການ FAO ເພື່ອຂົນຂວາຍການສະໜັບສະໜູນ ສຳລັບການຜ່ານຄຳແນະນຳສະບັບເຫຼົ່ານີ້.

ຄຳແນະນຳສະບັບເຫຼົ່ານີ້ ມີຫຼາຍກວ່າ 100 ວັກ ຊຶ່ງຖືກແບ່ງອອກ ເປັນ 13 ໝວດ. ເອກະສານສະບັບນີ້ ເປັນພຽງ ການສະຫຼຸບເນື້ອໃນຂອງຄຳແນະນຳນີ້, ຊຶ່ງຖືກສ້າງສຳລັບກຸ່ມ ICSF ໂດຍ ຈອນ ກູຣຽນ (John Kurien), ສະມາຊິກຜູ້ກໍ່ຕັ້ງກຸ່ມ ICSF, ຜູ້ທີ່ໄດ້ເຮັດວຽກເປັນສີ່ທົດສະວັດຜ່ານມາ ນຳຊຸມຊົນຫາປາຂະໜາດນ້ອຍ ໃນຫຼາຍຂົງເຂດໃນທົ່ວໂລກ, ໂດຍສະເພາະ ຢູ່ ເກຣາລາ, ປະເທດອິນເດຍ.

# ບົດນຳ

ຄຳແນະນຳ SSF ໄດ້ຮັບການພັດທະນາຂຶ້ນ ໃຫ້ເປັນສ່ວນປະກອບຂອງກິດການປະພຶດ ຕົນ ສຳລັບການປະມົງທີ່ມີຄວາມຮັບຜິດຊອບ ຂອງອົງການ FAO ໃນປີ 1995. ຄຳແນະນຳດັ່ງກ່າວ ແກ້ໄຂກ່ຽວກັບການປະມົງຂະໜາດນ້ອຍ ແລະ ກວມເອົາທຸກກິດຈະກຳ ຕາມລະບົບຕ່ອງໂສ້ຄຸນຄ່າທັງໝົດ ທີ່ດຳເນີນການ ໂດຍທັງຜູ້ຊາຍແລະແມ່ຍິງ. ການປະມົງ ຂະໜາດນ້ອຍ ປະກອບສ່ວນໃນການຫາປາ ເຄິ່ງໜຶ່ງຂອງໂລກ ແລະ ນຳໃຊ້ແຮງງານ ເຖິງ 90 ສ່ວນຮ້ອຍ ຂອງຄົນຫາປາ ແລະ ຊາວປະມົງໃນທົ່ວໂລກ. ການປະມົງຂະໜາດນ້ອຍ ແລະ ຊຸມຊົນຫາປາເປັນຕົວແທນຂອງຂະແໜງການຍ່ອຍທີ່ຫຼາກຫຼາຍ ແລະ ມີການເຄື່ອນ ໄຫວຢ່າງຕັ້ງໜ້າ ດ້ວຍຄຸນລັກສະນະສະເພາະທີ່ຂື້ນກັບທີ່ຕັ້ງຂອງຕົນ. ສ່ວນໃຫຍ່ພວກເຂົາ ເປັນວິສາຫະກິດຄອບຄົວ,ທີ່ປັກຫຼັກໃນຊຸມຊົນທ້ອງຖິ່ນ. ພວກເຂົາສືບຕໍ່ຖືກເຮັດໃຫ້ດ້ອຍຄ່າ. ຄວາມທຸກຍາກໃນຊຸມຊົນຫາປາຂະໜາດນ້ອຍ ມີລັກສະນະຫຼາຍມິຕິ. ການຮັກສາ ແລະ ການ ເພີ້ມການປະກອບສວນຂອງການປະມົງຂະໜາດນ້ອຍ ປະເຊີນໜ້າກັບຫຼາຍໆສິ່ງທ້າທາຍ ແລະ ສິ່ງກີດຂວາງ. ຄຳແນະນຳສະບັບເຫຼົ່ານີ້ຖືກສ້າງຂຶ້ນ ໂດຍຜ່ານຂະບວນການປຶກສາຫາລື ທີ່ເປັນໜຶ່ງດຽວ, ມີສ່ວນຮ່ວມ. ຄຳແນະນຳດັ່ງກາວ ມີຄວາມສອດຄ່ອງກັບ, ແລະ ສົ່ງເສີມ, ມາດຕະຖານສາກົນດ້ານສິດທິມະນຸດ.



## 1. ຈຸດປະສົງ

ຈຸດປະສົງຂອງຄໍາແນະນໍາ SSF ແມ່ນເພື່ອຮັບປະກັນວ່າ ການປະມົງຂະໜາດນ້ອຍ ຈະ:

- ເພີ້ມທະວີການຮັບປະກັນສະບຽງອາຫານໃນທົ່ວໂລກ;
- ສົ່ງເສີມການປະກອບສ່ວນ ທາງດ້ານເສດຖະກິດ-ສັງຄົມ ໃນອະນາຄົນ ຂອງໂລກ;
- ປະກອບສ່ວນປັບປຸງສະພາບການດ້ານເສດຖະກິດ-ສັງຄົມ ຂອງຊາວປະມົງ; ແລະ
- ບັນລຸການນໍາໃຊ້ຊັບພະຍາກອນປະມົງແບບຍືນຍົງ.

ໃນຂັ້ນຕອນນີ້, ຄໍາແນະນໍາສະບັບເຫຼົ່ານີ້ ຄວນເພີ້ມການປູກຈິດສໍານຶກກ່ຽວກັບພາລະບົດບາດ, ການປະກອບສ່ວນ ແລະ ທ່າແຮງບົ່ມຊ້ອນ ຂອງການປະມົງຂະໜາດນ້ອຍ.

ຈຸດປະສົງເຫຼົ່ານີ້ ຄວນບັນລຸໄດ້ ໂດຍຜ່ານການສົ່ງເສີມວິທີການຕາມພື້ນຖານສິດທິມະນຸດ. ຊຸມຊົນຫາປາຂະໜາດນ້ອຍ ຄວນມີສິດອໍານາດເພີ້ມຂຶ້ນ ເພື່ອໃຫ້ມີສ່ວນຮ່ວມໃນຂະບວນການຕັດສິນບັນຫາ, ແລະ ມີຄວາມຮັບຜິດຊອບ ຕໍ່ຄວາມຍືນຍົງ.



## 2. ລັກສະນະ ແລະ ຂອບເຂດ

ຄຳແນະນຳ SSF ມີຂອບເຂດແບບສະໝັກໃຈ ແລະ ສາກົນ, ແລະ ສຸມໃສ່ປະເທດກຳລັງພັດທະນາ. ຄຳແນະນຳສະບັບເຫຼົ່ານີ້ ໝາຍຄວາມວ່າກວມເອົາທຸກກິດຈະກຳທີ່ກ່ຽວຂ້ອງກັບການປະມົງ ໃນທະເລ ແລະ ນ້ຳຈືດໃນແຜ່ນດິນ. ຄຳແນະນຳເຫຼົ່ານີ້ ຖືກສະເໜີໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງກັບການປະມົງ — ລັດຕ່າງໆ, INGOs, CSOs, NGOs, ອົງການຈັດຕັ້ງດ້ານວິຊາການ ແລະ ພາກເອກະຊົນ ໄດ້ເອົາໃຈໃສ່. ຄຳແນະນຳດັ່ງກ່າວ ຮັບຮູ້ຄວາມຫຼາກຫຼາຍຂອງການປະມົງຂະໜາດນ້ອຍ ແລະ ຍອມຮັບວ່າ ບໍ່ມີຄຳນິຍາມທີ່ເປັນມາດຕະຖານ ສຳລັບເຂົາເຈົ້າ. ບັນດາລັດຕ່າງໆ ຄວນກຳນົດ, ໂດຍຜ່ານຂະບວນການແບບມີສ່ວນຮ່ວມ ແລະ ໂປ່ງໃສ, ວ່າການປະມົງໃດ ມີຂະໜາດນ້ອຍ — ດັ່ງນັ້ນຈຶ່ງຕົກຢູ່ໃນຂອບເຂດ ຂອງຄຳແນະນຳເຫຼົ່ານີ້ — ແລະ ກຳນົດວ່າປະຊາຊົນທີ່ອ່ອນໄຫວງ່າຍທີ່ສຸດ ໃນນີ້ແມ່ນໃຜ ເພາະຄຳແນະນຳເຫຼົ່ານີ້ ກ່ຽວຂ້ອງກັບເຂົາເຈົ້າຫຼາຍທີ່ສຸດ. ຄຳແນະນຳສະບັບເຫຼົ່ານີ້ ຕ້ອງຖືກຕີຄວາມໝາຍ ແລະ ນຳໃຊ້ ໂດຍສອດຄ່ອງກັບລະບົບທາງດ້ານກົດໝາຍແຫ່ງຊາດ ແລະ ສະຖາບັນຕ່າງໆ.



## 3. ຫຼັກການຊີ້ນຳ

ຄຳແນະນຳເຫຼົ່ານີ້ ໄດ້ອີງໃສ່ 13 ຫຼັກການຊີ້ນຳ. ສິ່ງເຫຼົ່ານີ້ ໄດ້ອີງຕາມພື້ນຖານມາດຕະຖານສາກົນ ດ້ານສິດທິມະນຸດ, ມາດຕະຖານການປະມົງທີ່ມີຄວາມຮັບຜິດຊອບ ແລະ ການປະຕິບັດຕົວຈິງໃນການພັດທະນາ ແບບຍືນຍົງ, ໂດຍໄດ້ເອົາໃຈໃສ່ ຕໍ່ກຸ່ມທີ່ມີຄວາມອ່ອນໄຫວງ່າຍ ແລະ ຖືກເຮັດໃຫ້ດ້ອຍຄ່າ ແລະ ຄວາມຕ້ອງການ ໃນການສະໜັບສະໜູນ ການຫັນເປັນຮູບປະທຳ ສິດທິຕໍ່ອາຫານ ທີ່ເໝາະສົມ.

ຫຼັກການເຫຼົ່ານີ້ ລວມມີ:

01. ສິດທິມະນຸດ ແລະ ກຽດສັກສີ;

02. ການເຄົາລົບນັບຖືວັດທະນາທຳ;

03. ການບໍ່ຈຳແນກແບ່ງຊັ້ນ;

04. ຄວາມສະເໝີພາບ ແລະ ເປັນທຳ ລະຫວ່າງຍິງຊາຍ;

05. ຄວາມເປັນທຳ ແລະ ສະເໝີພາບ;

06. ການໃຫ້ການປຶກສາຫາລື ແລະ ການມີສ່ວນຮ່ວມ;

07. ກົດຂອງກົດໝາຍ;

08. ຄວາມໂປ່ງໃສ;

09. ຄວາມຮັບຜິດຊອບ;

10. ຄວາມຍືນຍົງທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ;

11. ວິທີການແບບທົ່ວໄປ ແລະ ປະສົມປະສານ;

12. ຄວາມຮັບຜິດຊອບຕໍ່ສັງຄົມ; ແລະ

13. ຄວາມເປັນໄປໄດ້ ແລະ ການມີຊີວິດທາງສັງຄົມ ແລະ ເສດຖະກິດ.

## 4. ການພົວພັນກັບເຄື່ອງມືສາກົນອື່ນໆ

ຄຳແນະນຳສະບັບເຫຼົ່ານີ້ ຄວນຖືກຕີຄວາມໝາຍ ແລະ ນຳໃຊ້ ໃຫ້ສອດຄ່ອງກັບສິດທິ ແລະ ພັນທະທີ່ມີຢູ່ ພາຍໃຕ້ກົດໝາຍພາຍໃນ ແລະ ສາກົນ ແລະ ໂດຍຄຳນຶງເຖິງຂໍ້ຜູກມັດຕາມຄວາມສະໝັກໃຈ ພາຍໃຕ້ເຄື່ອງມືຂອງພາກພື້ນ ແລະ ສາກົນທີ່ມີຜົນບັງຄັບໃຊ້.

ຄຳແນະນຳເຫຼົ່ານີ້ ອາດຖືກນຳໃຊ້ ເພື່ອເປັນທິດທາງໃນການປັບປຸງ ແລະ ເປັນສິ່ງບັນດານໃຈໃໝ່ ຫຼື ຂໍ້ກຳນົດດ້ານນິຕິກຳ ແລະ ລະບຽບການເພີ່ມເຕີມ. ເຖິງຢ່າງໃດກໍ່ຕາມ, ເນື້ອໃນຂອງຄຳແນະນຳເຫຼົ່ານີ້ ບໍ່ຄວນຖືກອ່ານ ວ່າເປັນການຈຳກັດ ຫຼື ທຳລາຍສິດທິ ຫຼື ພັນທະໃດໜຶ່ງ ຂອງລັດໃດໜຶ່ງ ທີ່ຢູ່ພາຍໃຕ້ກົດໝາຍສາກົນ.



## 5. ການຄຸ້ມຄອງການຄອບຄອງການປະມົງຂະໜາດນ້ອຍ ແລະ ການບໍລິຫານ ຊັບພະຍາກອນ

### A. ການຄຸ້ມຄອງການຄອບຄອງແບບມີຄວາມຮັບຜິດຊອບ

ການຄຸ້ມຄອງການຄອບຄອງແບບມີຄວາມຮັບຜິດຊອບ ຂອງຊັບພະຍາກອນທີ່ເໝາະສົມ ເປັນ ສິ່ງສຳຄັນຕົ້ນຕໍ ສຳລັບການບັນລຸຜົນສຳເລັດ ໃນການພັດທະນາທາງດ້ານເສດຖະກິດ-ສັງຄົມ ແລະ ວັດທະນາທຳ ແລະ ການຫັນເປັນຮູບປະທຳ ສິດທິມະນຸດ ຂອງຊຸມຊົນຫາປາຂະໜາດນ້ອຍ. ຊຸມຊົນຫາປາຂະໜາດນ້ອຍ ຄວນມີສິດທິຄອບຄອງ ທີ່ຮັບປະກັນ, ເປັນທຳ ແລະ ທີ່ເໝາະສົມທາງດ້ານສັງຄົມ ແລະ ວັດທະນາທຳ ກັບຊັບພະຍາກອນການປະມົງ, ເຂດຫາປາ ແລະ ທີ່ດິນ ແລະ ປ່າໄມ້ໃກ້ຄຽງ. ຕ້ອງມີການເອົາໃຈໃສ່ເປັນພິເສດ ຕໍ່ສິດທິຄອບຄອງຂອງແມ່ຍິງ. ທຸກຮູບແບບຂອງສິດທິຄອບຄອບທາງການ ຕ້ອງຖືກກຳນົດ, ບັນທຶກ ແລະ ເຄົາລົບ. ສິ່ງນີ້ຕ້ອງຖືກປະຕິບັດ ດ້ວຍລະບຽບກົດໝາຍ ຖ້າຈຳເປັນ ໂດຍຄຳນຶງເຖິງສິດທິທາງປະເພນີ ແລະ ພິເສດ ຕໍ່ຊັບພະຍາກອນນໍ້າ ແລະ ທີ່ດິນຂອງປະຊາຊົນເຜົ່າພື້ນເມືອງເດີມ ແລະ ຊົນເຜົ່າສ່ວນນ້ອຍໂດຍສະເພາະ. ເມື່ອມີການປະຕິຮູບດ້ານກົດໝາຍ ໄດ້ມອບສິດທິແກ່ແມ່ຍິງ, ສິດທິດັ່ງກ່າວຕ້ອງຖືກຈັດສັນຢ່າງເໝາະສົມໃນລະບົບຄອບຄອງແບບປະເພນີ. ບົດບາດຂອງຊຸມຊົນຫາປາຂະໜາດນ້ອຍ ແລະ ປະຊາ ຊົນເຊົາເຜົ່າພື້ນເມືອງເດີມ ເພື່ອຟື້ນຟູ, ປົກປັກຮັກສາ, ປ້ອງກັນ ແລະ ຄຸ້ມຄອງຮ່ວມກັນ ລະບົບນິເວດທາງນໍ້າ ແລະ ດິນແຄມນໍ້າ ຂອງທ້ອງຖິ່ນ ຕ້ອງເປັນທີ່ຮັບຮູ້. ເມື່ອບັນດາລັດຕ່າງໆ ເປັນເຈົ້າຂອງ ຫຼື ຄວບຄຸມ ຊັບພະຍາກອນທີ່ດິນແລະນໍ້າ, ສິດທີ່ຄອບຄອງຂອງລັດດັ່ງກາວ ຕ້ອງຖືກສ້າງຂຶ້ນ ໂດຍມີການພິຈາລະນາ ເຖິງຈຸດປະສົງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ, ໂດຍສະເພາະ, ເມື່ອພວກມັນຖືກໃຊ້ຮ່ວມກັນ ແລະ ຖືກຄຸ້ມຄອງໂດຍຊຸມຊົນຫາປາຂະໜາດນ້ອຍ.

ການໃຫ້ການເຂົ້າເຖິງແບບພິເສດ ສຳລັບການປະມົງຂະໜາດນ້ອຍ ເພື່ອຫາປາໃນໜ້ານໍ້າແຫ່ງຊາດ ໄດ້ຖືກປະກອບເຂົ້າໃນກົດການປະພຶດຕົນ ສຳລັບການປະມົງແບບມີຄວາມຮັບຜິດຊອບ (ມາດຕາ 6.18). ອີງຕາມພື້ນຖານດັ່ງກ່າວນີ້, ບັນດາລັດຄວນຈັດຕັ້ງປະຕິບັດມາດຕະການຕ່າງໆ ເປັນຕົ້ນ ເຂດສະຫງວນໄວ້ສຳລັບການປະມົງຂະໜາດນ້ອຍ. ເມື່ອກອນຂໍ້ຕົກລົງເພື່ອໃຫ້ມີການເຂົ້າເຖິງຊັບພະຍາກອນ ຖືກກຳນົດນຳພາກສ່ວນທີສາມ, ການຮຽກຮ້ອງຂອງຊຸມຊົນຫາປາຂະໜາດນ້ອຍ ເພື່ອເຂົ້າເຖິງເຂດດັ່ງກ່າວ ຄວນຈະໄດ້ຮັບການພິຈາລະນາຢ່າງເໝາະສົມ.

ຜູ້ຊົມໃຊ້ອື່ນໆ ກຳລັງພະຍາຍາມເພີ້ມການແຂ່ງຂັນ ສຳລັບເຂດປະມົງຂະໜາດນ້ອຍ, ຊຶ່ງພາໃຫ້ມີຂໍ້ຂັດແຍ່ງ. ບັນດາລັດຕ່າງໆ ຄວນຮັບປະກັນວ່າ ຊຸມຊົນຫາປາຂະໜາດນ້ອຍ ໄດ້ຮັບການສະໜັບສະໜູນພິເສດ ແລະ ບໍ່ຖືກ ຂັບໄລ່ໂດຍພະລາການ ຫຼືວ່າສິດທິຄອບຄອງທາງກົດໝາຍຂອງເຂົາເຈົ້າ ຖືກລະເມີດ ຫຼື ທຳລາຍ. ໃນກໍລະນີຂອງໂຄງການ ພັດທະນາຂະໜາດໃຫຍ່, ບັນດາລັດຕ່າງໆ ແລະ ພາກສ່ວນອື່ນໆ ໄດ້ມີການປຶກສາຫາລືກັນຢ່າງ ມີຄວາມໝາຍ ແລະ ດຳເນີນການຄົ້ນຄວ້າ ກ່ຽວກັບຜົນກະທົບຕໍ່ຊຸມຊົນຫາປາຂະໜາດນ້ອຍ.

ການຜິດຖຽງກັນ ກ່ຽວກັບສິດທິຄອບຄອງ ທີ່ກ່ຽວຂ້ອງກັບຊຸມຊົນຫາປາຂະໜາດນ້ອຍ ຄວນຖືກແກ້ໄຂໂດຍລັດນັ້ນ ໃຫ້ທັນເວລາ ໃນຮູບແບບທີ່ບໍ່ມີຄ່າໃຊ້ຈ່າຍສູງ ແລະ ມີປະສິດທິຜົນ ດ້ວຍວິທີການແກ້ໄຂ ທີ່ລວມມີ ການຊົດໃຊ້ຄວາມເສຍຫາຍ, ພຽງແຕ່ການຊົດເຊີຍ ແລະ ການປົວແປງ, ຖືກບັງຄັບໃຊ້ທັນທີ.

ການຍົກຍ້າຍ ຈາກໄພທຳມະຊາດ ແລະ/ຫຼື ຂໍ້ຂັດແຍ່ງດ້ວຍອາວຸດ ມີຜົນກະທົບເພີ້ມຂຶ້ນຕໍ່ຊຸມຊົນຫາປາຂະໜາດນ້ອຍ. ບັນດາລັດຕ່າງໆ ຕ້ອງໃຊ້ຄວາມພະຍາຍາມທັງໝົດເພື່ອກູ້ຄືນສິດທິການເຂົ້າເຖິງ ພື້ນທີ່ຫາປາເດີມ ແລະ ທີ່ດິນແຄມຝັ່ງ, ໂດຍຮັກສາຄວາມຍືນຍົງຂອງຊັບພະຍາກອນປະມົງ ໄວ້ໃນໃຈ. ໃນກໍລະນີເຫຼົ່ານີ້, ຄວນມີການສ້າງກົນໄກຕ່າງໆ ເພື່ອສະໜັບສະໜູນຊຸມຊົນ ທີ່ໄດ້ຮັບຜົນກະທົບ ຈາກການລະເມີດສິດທິມະນຸດຢ່າງຮ້າຍ ແຮງ ແນໃສ່ຟື້ນຟູຄືນ ຊີວິດຂອງເຂົາເຈົ້າ ແລະ ຕ້ອງລົບລ້າງ ທຸກການເລືອກປະຕິບັດຕໍ່ແມ່ຍິງໃນການດຳເນີນການຄອບຄອງ.

## B. ການບໍລິຫານຊັບພະຍາກອນ ຢ່າງຍືນຍົງ

ຄວນມີການຮັບຮອງນຳໃຊ້ມາດຕະການການອະນຸລັກໄລຍະຍາວ ແລະ ການນຳໃຊ້ຊັບພະຍາກອນການປະມົງ ຢ່າງຍືນຍົງ ແລະ ການຮັບຮູ້ຢ່າງເໝາະສົມ ກ່ຽວກັບຄວາມຕ້ອງການ ແລະ ກາລະໂອກາດ ຂອງການປະມົງຂະໜາດນ້ອຍ. ສິດທິໄປພ້ອມໆກັນກັບຄວາມຮັບຜິດຊອບ. ສິດທິໃນການຄອບຄອງ ທີ່ສົມດູນດ້ວຍໜ້າທີ່ ຊຶ່ງສຸມໃສ່ການ ອະນຸລັກ ແລະການນຳໃຊ້ແບບຍືນຍົງ.

ການປະມົງຂະໜາດນ້ອຍ ຄວນນຳໃຊ້ການດຳເນີນການຫາປາ ທີ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມ ແລະ ສາຍພັນ ທີ່ກ່ຽວຂ້ອງໜ້ອຍທີ່ສຸດ. ບັນດາລັດຕ່າງໆ ຄວນສະໜັບສະໜູນການປະມົງຂະໜາດນ້ອຍ ເພື່ອໃຫ້ຮັບຜິດຊອບຕໍ່ກັບການບໍລິຫານ ຊັບພະຍາກອນ. ບັນດາລັດຕ່າງໆ ຄວນໃຫ້ຊຸມຊົນມີສ່ວນຮ່ວມ ໃນການອອກແບບ, ວາງແຜນ ແລະຈັດຕັ້ງປະຕິບັດມາດຕະການຄຸ້ມຄອງ, ຊຶ່ງຮັບປະກັນການມີສ່ວນຮ່ວມແບບເປັນທຳຂອງແມ່ຍິງ ແລະ ກຸ່ມອື່ນໆ ທີ່ມີຄວາມອ່ອນໄຫວງ່າຍ. ພາຍໃນຂອບເຂດຂອງ ກົດໝາຍພາຍໃນ, ບັນດາລັດຕ່າງໆ ຄວນສົ່ງເສີມລະບົບການບໍລິຫານແບບມີສ່ວນຮ່ວມ.

ບັນດາລັດຕ່າງໆ ຄວນສ້າງ ແລະ ສົ່ງເສີມລະບົບການຕິດຕາມກວດກາ, ຄວບຄຸມ ແລະລາດຕະເວນ (MCS) ທີ່ນຳໃຊ້ໄດ້ ແລະ ແທດເໝາະ ສຳລັບການປະມົງຂະໜາດນ້ອຍ. ບັນດາລັດຕ່າງໆ ຄວນຈະມຸ້ງໝັ້ນ ເພື່ອຢັບຢັ້ງ, ປ້ອງກັນ ແລະ ລົບລ້າງ ການດຳເນີນການຫາປາ ທີ່ຜິດກົດໝາຍ ແລະ ທີ່ເປັນການທຳລາຍ ທັງໝົດ ແລະ ຊາວຫາປາຂະໜາດນ້ອຍຄວນ ສະໜັບສະໜູນ ລະບົບ MCS ແລະ ຍັງສະໜອງຂໍ້ມູນຂ່າວສານ ທີ່ຈຳເປັນສຳລັບການບໍລິຫານ ໃຫ້ແກ່ອົງການຕ່າງໆທີ່ມີສິດອຳນາດ.

ບັນດາລັດຕ່າງໆ ຄວນໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງທຸກພາກສ່ວນ ທີ່ກ່ຽວກັບການຈັດການບໍລິຫານຮ່ວມກັນ, ຊຶ່ງເປັນປະໂຫຍດສຳລັບຂະບວນການສະໜັບສະໜູນທາງດ້ານກົດໝາຍ. ການປະມົງຂະໜາດນ້ອຍ ຄວນເປັນຕົວ

ແທນໃນສະມາຄົມ ແລະ ອົງການຈັດຕັ້ງ ຂັ້ນທ້ອງຖິ່ນ ແລະ ແຫ່ງຊາດ ທີ່ກ່ຽວຂ້ອງ ແລະ ເປັນສ່ວນໜຶ່ງທີ່ມີຄວາມຫ້າວຫັນ ໃນຂະບວນການຕັດສິນບັນຫາ ແລະ ສ້າງນະໂຍບາຍດ້ານການປະມົງ.

ໃນການສົ່ງເສີມ ການບໍລິຫານຮ່ວມກັນ, ທັງບັນດາລັດຕ່າງໆ ແລະ ຊາວຫາປາຂະໜາດນ້ອຍ ຄວນສະໜັບສະໜູນ ໃຫ້ຜູ້ຊາຍ ແລະ ແມ່ຍິງ ມີສ່ວນຮ່ວມໃນການເກັບກ່ຽວ, ແລະ ພ້ອມທັງການດໍາເນີນການກ່ອນ ແລະ ຫຼັງ ການເກັບກ່ຽວ, ເພື່ອປະກອບສ່ວນຄວາມຮູ້, ມູມມອງ ແລະ ຄວາມຕ້ອງການຂອງຕົນ.

ບັນດາລັດຕ່າງໆ ຄວນຮັບປະກັນວ່າ ສິດທິຄອບຄອງ ຂອງຊຸມຊົນຫາປາຂະໜາດນ້ອຍ ຖືກປົກປ້ອງ ເມື່ອມີສ່ວນກ່ຽວຂ້ອງກັບບັນຫາດ້ານເຂດແດນ ທີ່ກ່ຽວກັບໜ້ານໍ້າ ແລະ ຊັບພະຍາກອນທີ່ໃຊ້ຮ່ວມກັນ.

ບັນດາລັດຕ່າງໆ ຄວນຫຼີກລ້ຽງ ນະໂຍບາຍ ແລະ ມາດຕະການດ້ານການເງິນ ທີ່ປະກອບສ່ວນໃນການຫາປາທີ່ເກີນຂອບເຂດຄວາມສາມາດ, ຊຶ່ງພາໃຫ້ມີການຫາປາເກີນ ແລະ ມີຜົນກະທົບທີ່ບໍ່ດີ ຕໍ່ການປະມົງຂະໜາດນ້ອຍ.



## 6. ການພັດທະນາສັງຄົມ, ການວ່າຈ້າງງານ ແລະ ວຽກງານທີ່ດີ

ທຸກພາກສ່ວນ ຄວນໃຊ້ວິທີການທົ່ວໄປ ຕໍ່ການພັດທະນາ ແລະ ບໍລິຫານການປະມົງຂະໜາດນ້ອຍ. ບັນດາລັດຕ່າງໆ ຄວນສົ່ງເສີມການລົງທຶນ ໃສ່ສາທາລະນະສຸກ, ການສຶກສາ, ການລຶບລ້າງຄວາມກືກໜັງສື, ການປະກອບສ່ວນເຂົ້າຂອງດິຈິຕອນ ແລະ ຄວາມສາມາດດ້ານວິຊາການອື່ນໆ.

ບັນດາລັດຕ່າງໆ ຄວນສົ່ງເສີມແຜນການຮັກສາຄວາມປອດໄພທາງສັງຄົມ ສຳລັບແຮງງານຄົນໃນການປະມົງຂະໜາດນ້ອຍ ໃນຕະຫຼອດຕ່ອງໂສ້ຄຸນຄ່າທັງໝົດ. ບັນດາລັດຕ່າງໆ ຄວນສະໜັບສະໜູນການພັດທະນາແຜນສຳລັບການຝາກປະຢັດ, ສິນເຊື່ອ ແລະ ປະກັນໄພ, ໂດຍເນັ້ນໃສ່ ການປະກອບສ່ວນເຂົ້າ ແລະ ການເຂົ້າເຖິງຂອງແມ່ຍິງ ຕໍ່ການບໍລິການເຫຼົ່ານັ້ນ.

ທຸກຄົນ ຄວນຮັບຮູ້ລະດັບກິດຈະກຳເຕັມສ່ວນ ຂອງຕ່ອງໂສ້ຄຸນຄ່າການປະມົງຂະໜາດນ້ອຍ ດັ່ງເປັນການດຳເນີນງານດ້ານເສດຖະກິດ ແລະ ວິຊາການ.

ບັນດາລັດຕ່າງໆ ຄວນສົ່ງເສີມວຽກງານທີ່ດີ ສຳລັບທຸກຄົນ.

ບັນດາລັດຕ່າງໆ ຄວນຮັບປະກັນ ການຫັນເປັນຮູບປະທຳເທື່ອລະກ້າວ ກ່ຽວກັບສິດທິຂອງຊາວຫາປາຂະໜາດນ້ອຍ ແລະ ຜູ້ອອກແຮງງານຫາປາ ຕາມມາດຕະຖານການດຳລົງຊີວິດທີ່ເໝາະສົມ. ບັນດາລັດຕ່າງໆ ຄວນປະຕິບັດນະໂຍບາຍແບບລວມ, ບໍ່ມີການເລືອກປະຕິບັດ ແລະ ມີເສດຖະກິດທີ່ດີ ເພື່ອໃຫ້ບັນດາຊາວຜູ້ແຮງງານເຫຼົ່ານີ້ ມີລາຍໄດ້ຈາກການໃຊ້ແຮງງານ, ທຶນ ແລະ ການບໍລິຫານຂອງຕົນ ຢ່າງເປັນທຳ. ບັນດາລັດຕ່າງໆ ແລະ ພາກສ່ວນອື່ນໆ ຕ້ອງສະໜັບສະໜູນ ກາລະໂອກາດສ້າງລາຍຮັບ ທີ່ເປັນທາງເລືອກ. ເງື່ອນໄຂຕ່າງໆ ຄວນຖືກສ້າງສຳລັບຊຸມຊົນຫາປາຂະໜາດນ້ອຍ ເພື່ອດຳເນີນກິດຈະກຳທີ່ພົວພັນກັບການປະມົງຂອງຕົນ.

ການເຄື່ອນຍ້າຍ ເປັນຍຸດທະສາດການດຳລົງຊີວິດທົ່ວໄປ. ບັນດາລັດຕ່າງໆ ຄວນຮັບຮູ້ ແລະ ແກ້ໄຂສາເຫດ ແລະ ຜົນສະທ້ອນ ຂອງການເຄື່ອນຍ້າຍຂ້າມແດນ ຂອງຊາວຫາປາດັ່ງກ່າວນີ້.

ບັນດາລັດຕ່າງໆ ຄວນແກ້ໄຂເງື່ອນໄຂການເຮັດວຽກ ທາງດ້ານສຸຂະພາບ, ຄວາມປອດໄພ ແລະ ຄວາມບໍ່ຍຸຕິທຳໃນການປະກອບອາຊີບນີ້. ບັນດາລັດຕ່າງໆ ຄວນເຮັດວຽກເພື່ອຫັນໄປສູ່ການລຶບລ້າງແຮງງານທີ່ຖືກບັງຄັບ ແລະ ປ້ອງກັນບໍ່ໃຫ້ມີຂ້າທາດຈາກການເປັນໜີ້ສິນ.

ບັນດາລັດຕ່າງໆ ຄວນສະໜອງການເຂົ້າເຖິງໂຮງຮຽນ ແລະ ສິ່ງອຳນວຍຄວາມສະດວກດ້ານການສຶກສາ, ຊຶ່ງຮັບຮູ້ເຖິງຄວາມສຳຄັນ ກ່ຽວກັບການເປັນຢູ່ດີກິນດີ ແລະ ການສຶກສາຂອງເດັກນ້ອຍ ສຳລັບອະນາຄົດຂອງເຂົາເຈົ້າ.

ຄວາມສະຫຼັບຊັບຊ້ອນຂອງການຮັກສາຄວາມປອດໄພທ້ອງທະເລ ແລະ ນ້ຳຈືດເທິງແຜ່ນດິນ ແລະ ສາເຫດຫຼາກຫຼາຍທີ່ຢູ່ເບື້ອງຫຼັງການຂາດເຂີນນັ້ນຄວນຖືກຮັບຮູ້ ໂດຍທຸກພາກສ່ວນ.

ການຮັກສາຄວາມປອດໄພ ແລະ ສຸຂະພາບໃນການປະກອບອາຊີບ ຂອງການປະມົງຂະໜາດນ້ອຍ ຕ້ອງຖືກລວມເຂົ້າ ໃນການບໍລິການການປະມົງທົ່ວໄປ.

ບັນດາລັດຕ່າງໆ ຄວນປົກປັກຮັກສາສິດທິມະນຸດ ແລະ ກຽດສັກສີ ຂອງພາກສ່ວນກ່ຽວຂ້ອງກັບການປະມົງຂະໜາດນ້ອຍ ໃນສະພາບການທີ່ມີຂໍ້ຂັດແຍ່ງທີ່ໃຊ້ອາວຸດ.

## 7. ຕ່ອງໂສ້ຄຸນຄ່າ, ຫຼັງການເກັບກ່ຽວ ແລະ ການຄ້າ

ທຸກພາກສ່ວນ ຄວນຮັບຮູ້ ບົດບາດໃຈກາງຂອງຂະແໜງການຍ່ອຍຫຼັງການເກັບກ່ຽວຂອງການປະມົງຂະໜາດນ້ອຍ. ແມ່ຍິງມີບົດບາດໃຈກາງ ໃນຂະແໜງການຍ່ອນຫຼັງການ ເກັບກ່ຽວ ແລະ ສິ່ງນີ້ກໍຕ້ອງຖືກຮັບຮູ້ໂດຍທຸກພາກສ່ວນ.

ການລົງທຶນ ໃສ່ໂຄງລ່າງ, ໂຄງປະກອບການຈັດຕັ້ງ ແລະ ການພັດທະນາຂີດຄວາມສາມາດຂອງຂະແໜງການຍ່ອຍຫຼັງການເກັບກ່ຽວ ຢ່າງເໝາະສົມ ຕ້ອງໄດ້ຮັບການສະໜັບສະໜູນຈາກລັດນັ້ນ.

ຮູບແບບເດີມ ຂອງສະມາຄົມຊາວຫາປາ ແລະ ຊາວປະມົງ ຕ້ອງຖືກຮັບຮູ້.

ຕ້ອງສະແຫວງຫາ ວິທີການຕ່າງໆ ເພື່ອຫຼີກລ້ຽງການສູນເສຍຫຼັງການເກັບກ່ຽວ ແລະ ສ້າງຄຸນຄ່າເພີ່ມເຕີມ.

ບັນດາລັດຕ່າງໆ ຄວນສົ່ງເສີມການຄ້າທີ່ເປັນທຳ ແລະ ແບບບໍ່ມີການເລືອກປະຕິບັດ ຂອງຜະລິດຕະພັນການປະມົງຂະໜາດນ້ອຍ ໃນຕະຫຼາດທ້ອງຖິ່ນ, ຂັ້ນສູນກາງ, ພາກພື້ນ ແລະ ສາກົນ. ການສົ່ງເສີມການຄ້າສາກົນ ປາ ບໍ່ຄວນມີຜົນກະທົບໃນທາງລົບຕໍ່ຄວາມຕ້ອງການດ້ານໂພຊະນາການ ຂອງປະຊາຊົນ ຊຶ່ງຖືວ່າປາ ເປັນອາຫານທີ່ບໍ່ແພງນັ້ນ ແຕ່ເປັນສິ່ງສຳຄັນສຳລັບອາຫານການກິນ ແລະ ຄວາມເປັນຢູ່ດ້ານໂພຊະນາການໂດຍລວມຂອງເຂົາເຈົ້າ.

ປະໂຫຍດຈາກການຄ້າສາກົນ ຕ້ອງຖືກແບ່ງປັນຢ່າງເປັນທຳ ແລະ ຄວນມີລະບົບການບໍລິຫານການປະມົງແບບມີປະສິດທິຜົນ ເພື່ອປ້ອງກັນບໍ່ໃຫ້ມີການນຳໃຊ້ຊັບພະຍາກອນປະມົງເກີນຄວນ ຕາມຄວາມຕ້ອງການຂອງຕະຫຼາດ.

ການປະເມີນຜົນດ້ານສິ່ງແວດລ້ອມ,ສັງຄົມ ແລະອື່ນໆ ທີ່ກ່ຽວຂ້ອງ(ໃນທ່າມກາງການປະເມີນອື່ນໆ) ຄວນຈະເຊື່ອມໂຍງກັບບັນດານະໂຍບາຍ ແລະ ຂັ້ນຕອນດຳເນີນງານຕ່າງໆທີ່ຖືກດຳເນີນການ ເພື່ອຮັບປະກັນວ່າ ຜົນກະທົບທາງລົບຂອງການຄ້າສາກົນ ຕໍ່ກັບສິ່ງແວດລ້ອມ ແລະ ວັດທະນາທຳ, ການຮັບປະກັນສະບຽງອາຫານ ແລະ ການດຳລົງຊີວິດຂອງການປະມົງຂະໜາດນ້ອຍ ສາມາດຖືກວັດແທກ ແລະ ແກ້ໄຂຢ່າງເປັນທຳ.

ລັດ ຕ້ອງເປີດການເຂົ້າເຖິງຂໍ້ມູນຂ່າວສານ ກ່ຽວກັບຕະຫຼາດ ແລະ ການຄ້າ ໃຫ້ທັນເວລາ ແລະ ແບບຊັດເຈນ ສຳລັບພາກສ່ວນກ່ຽວຂ້ອງ ໃນຕ່ອງໂສ້ຄຸນຄ່າຂອງການປະມົງຂະໜາດນ້ອຍ.

## 8. ຄວາມສະເໝີພາບລະຫວ່າງຍິງ-ຊາຍ

ການເຊື່ອມບົດບາດຍິງ-ຊາຍ ຄວນເປັນສ່ວນໜຶ່ງ ຂອງຍຸດທະສາດພັດທະນາການປະມົງຂະໜາດນ້ອຍ. ບັນດາລັດຕ່າງໆ ຄວນປະຕິບັດພັນທະຂອງຕົນ ພາຍໃຕ້ກົດໝາຍສາກົນ ວ່າດ້ວຍສິດທິມະນຸດ ແລະ ຈັດຕັ້ງປະຕິບັດເຄື່ອງມື ຊຶ່ງຕົນເປັນພາຄີ ກ່ຽວກັບບັນຫາຂອງແມ່ຍິງ.

ມາດຕະການສະເພາະ ເພື່ອແກ້ໄຂການແບ່ງແຍກແມ່ຍິງ ຄວນຖືກຮັບຮອງ. ຄວາມສະເໝີພາບລະຫວ່າງຍິງ-ຊາຍ ຄວນເປັນຮູບປະທຳ ດ້ວຍການສ້າງນະໂຍບາຍ, ນິຕິກຳ ແລະ ປັບປຸງສ່ວນທີ່ບໍ່ສອດຄ່ອງກັບຈຸດປະສົງນີ້.

ລະບົບການປະເມີນຜົນວຽກງານ ຄວນຖືກພັດທະນາຂຶ້ນ ເພື່ອປະເມີນຜົນກະທົບຂອງນິຕິກຳ, ນະໂຍບາຍ ແລະ ການກະທຳ ສຳລັບການປັບປຸງສະຖານະພາບຂອງແມ່ຍິງໃຫ້ດີຂຶ້ນ ແລະ ບັນລຸເຖິງຄວາມສະເໝີພາບລະຫວ່າງຍິງ-ຊາຍ.

ຄວນມີການພັດທະນາເຕັກໂນໂລຊີທີ່ດີກວ່າເກົ່າ ທີ່ມີຄວາມສຳຄັນທີ່ເໝາະສົມ ສຳລັບວຽກງານຂອງແມ່ຍິງ.



## 9. ຄວາມສ່ຽງໄພພິບັດ ແລະ ການປ່ຽນແປງຂອງສະພາບອາກາດ

ການຕໍ່ສູ້ກັບການປ່ຽນແປງຂອງສະພາບອາກາດ ຮຽກຮ້ອງໃຫ້ມີການດໍາເນີນການຢ່າງຮີບດ່ວນ ແລະດ້ວຍຄວາມພະຍາຍາມສູງ. ຄວນມີການເອົາໃຈໃສ່ເປັນພິເສດຕໍ່ການຢູ່ອາໄສຂອງຊຸມຊົນຫາປາຂະໜາດນ້ອຍ ເທິງເກາະນ້ອຍ. ຕ້ອງມີວິທີການປະສົມປະສານ ແລະ ທົ່ວໄປດ້ວຍການປະສານງານລະຫວ່າງຂະແໜງການຕ່າງໆ. ຄວນມີການສະໜອງແຜນ ສໍາລັບການປັບຕົວ, ການຫຼຸດຜ່ອນ ແລະ ການຊ່ວຍເຫຼືອ ທີ່ເໝາະສົມ.

ໃນກໍລະນີໄພພິບັດ ທີ່ສ້າງຂຶ້ນມາດ້ວຍມະນຸດ ແລະ ສິ່ງຜົນກະທົບຕໍ່ການປະມົງຂະໜາດນ້ອຍແລະກາງ, ພາກສ່ວນທີ່ມີໜ້າທີ່ຮັບຜິດຊອບຄວນເປັນຜູ້ຮັບຜິດຊອບ. ຄວນມີການຄໍານຶງເຖິງຜົນກະທົບຂອງການປ່ຽນແປງສະພາບອາກາດ ແລະ ໄພພິບັດ ຕໍ່ດ້ານຕ່າງໆ ຂອງກິດຈະກໍາ ຫຼັງການເກັບກ່ຽວ ແລະ ການຄ້າ. ຄວນມີການນໍາໃຊ້ ແນວຄວາມຄິດ ກ່ຽວກັບ "ການສ້າງຄືນໃຫ້ດີກວ່າເກົ່າ" ໃນການຕອບໂຕ້ ແລະ ຟື້ນຟູ ຕໍ່ໄພພິບັດ. ຕ້ອງມີການຊຸກຍູ້ ແລະ ສິ່ງເສີມປະສິດທິພາບ ພະລັງງານ ຕະຫຼອດຕ່ອງໂສ້ຄຸນຄ່າທັງໝົດ.



## 10. ຄວາມສອດຄ່ອງກັບນະໂຍບາຍ, ການຮ່ວມມື ແລະ ການປະສານງານຂັ້ນສະຖາບັນ

ເພື່ອສົ່ງເສີມການພັດທະນາທົ່ວໄປ ໃນຊຸມຊົນການຫາປາຂະໜາດນ້ອຍ, ບັນດາລັດຕ່າງໆ ຄວນຮັບຮູ້ຄວາມຕ້ອງການ ດ້ານຄວາມສອດຄ່ອງກັບນະໂຍບາຍ ແລະ ດຳເນີນການເພື່ອ ສິ່ງດັ່ງກ່າວ.

ບັນດາລັດຕ່າງໆ ຄວນພັດທະນາ ແລະ ນຳໃຊ້ວິທີການວາງແຜນດ້ານພື້ນທີ່, ໂດຍຄຳນຶງເຖິງ ຜົນປະໂຫຍດຂອງການປະມົງຂະໜາດນ້ອຍ ແລະ ບົດບາດຂອງການບໍລິຫານເຂດຕິດ ຝັ່ງທະເລແບບປະສົມປະສານ.

ບັນດາລັດຕ່າງໆ ຄວນຮັບຮອງເອົາມາດຕະການດ້ານນະໂຍບາຍ ເພື່ອຮັບປະກັນການ ປະສານກົມກຽວຂອງບັນດານະໂຍບາຍຕ່າງໆ ທີ່ສົ່ງຜົນກະທົບຕໍ່ສາທາລະນະສຸກ ຂອງສິ່ງ ທີ່ມີຊີວິດ ແລະ ລະບົບນິເວດ ໃນທະເລ ແລະ ນ້ຳຈືດເທິງແຜ່ນດິນ.

ນະໂຍບາຍການປະມົງ ຄວນສະໜອງວິໄສທັດໄລຍະຍາວ ສຳລັບການປະມົງຂະໜາດນ້ອຍ ແບບຍືນຍົງ.

ຄວນມີການກຳນົດຈຸດຕິດຕໍ່ປະສານງານຈະແຈ້ງ ໃນອົງການປົກຄອງຂອງລັດຖະບານ ແລະ ອົງກອນຕ່າງໆ ສຳລັບຊຸມຊົນຫາປາຂະໜາດນ້ອຍ.

ພາກສ່ວນທີ່ກ່ຽວຂ້ອງກັບການປະມົງຂະໜາດນ້ອຍ ຄວນສົ່ງເສີມການປະສານງານລະ ຫວ່າງບັນດາອົງການຈັດຕັ້ງຂອງຕົນ.

ບັນດາລັດຕ່າງໆ ຄວນສົ່ງເສີມໂຄງສ້າງການຄຸ້ມຄອງທ້ອງຖິ່ນ ທີ່ປະກອບສ່ວນ ໃຫ້ມີການຄຸ້ມ ຄອງການປະມົງຂະໜາດ ນ້ອຍຢ່າງມີປະສິດທິຜົນ. ຕ້ອງມີການຮ່ວມມືສາກົນ, ຂັ້ນພາກພື້ນ ແລະ ພາກພື້ນຍ່ອຍ ເພື່ອຮັກສາການປະມົງຂະໜາດນ້ອຍ ໃຫ້ຍືນຍົງ.



## 11. ຂໍ້ມູນຂ່າວສານ, ການຄົ້ນຄວ້າ ແລະ ການສື່ສານ

ບັນດາລັດຕ່າງໆ ຄວນສ້າງ ລະບົບເກັບກຳຂໍ້ມູນທີ່ກ່ຽວຂ້ອງກັບການຕັດສິນບັນຫາ ໃນການບໍລິຫານການປະມົງຂະໜາດນ້ອຍໃຫ້ຍືນຍົງ ດ້ວຍຮູບແບບທີ່ໂປ່ງໃສ. ການຕັດສິນບັນຫາທີ່ມີປະສິດທິຜົນ ຮຽກຮ້ອງໃຫ້ມີການສື່ສານ ແລະ ຂໍ້ມູນຂ່າວສານ. ບັນດາລັດຕ່າງໆ ຄວນມຸ້ງໝັ້ນ ປ້ອງກັນບໍ່ໃຫ້ມີການສໍ້ລາດບັງຫຼວງ, ຄວນເພີ່ມຄວາມໂປ່ງໃສ ແລະ ໃຫ້ບັນດາຜູ້ຕັດສິນບັນຫາ ມີຄວາມຮັບຜິດຊອບ.

ຊຸມຊົນຫາປາຂະໜາດນ້ອຍ ເປັນຜູ້ມີ, ຜູ້ສະໜອງ ແລະ ຜູ້ຮັບ ຄວາມຮູ້. ຄວນມີໄວ້ ຂໍ້ມູນຂ່າວສານ ທີ່ມີຄວາມກ່ຽວຂ້ອງ, ມີຄວາມຈຳເປັນ ສຳລັບການປະມົງຂະໜາດນ້ອຍທີ່ມີຄວາມຮັບຜິດຊອບ ແລະ ການພັດທະນາແບບຍືນຍົງ. ຄວາມຮູ້, ວັດທະນາທຳ, ການດຳເນີນການຕົວຈິງ ແລະ ເຕັກໂນໂລຊີ ຂອງຊຸມຊົນຫາປາຂະໜາດນ້ອຍ ຄວນຖືກຮັບຮູ້ ແລະ ສ້າງເປັນເອກະສານໄວ້.

ບັນດາລັດຕ່າງໆ ຄວນສະໜອງການສະໜັບສະໜູນ ໃຫ້ກັບຊຸມຊົນຫາປາຂະໜາດນ້ອຍ — ໂດຍສະເພາະປະຊາຊົນຊົນເຜົ່າພື້ນເມືອງເດີມ ແລະ ແມ່ຍິງ — ທີ່ອາໄສການຫາປາເພື່ອລ້ຽງຊີບ. ເວທີ ແລະ ເຄືອຂ່າຍທີ່ມີຢູ່ ແລະ ເໝາະສົມ ໃນຊຸມຊົນ, ລະດັບຊາດ ແລະ ສູງກວ່າ ຕ້ອງຖືກນຳໃຊ້ເພື່ອສົ່ງເສີມກະແສ ແລະ ການແລກປ່ຽນຂໍ້ມູນຂ່າວສານ.

ບັນດາລັດຕ່າງໆ ຄວນໃຫ້ມີໄວ້ ກອງທຶນ ສຳລັບການຄົ້ນຄວ້າກ່ຽວກັບການປະມົງຂະໜາດນ້ອຍ ແລະ ຊຸກຍູ້ການເກັບກຳຂໍ້ມູນ ແລະ ການວິໄຈ ແບບປະສານງານກັນ ແລະ ແບບມີສ່ວນຮ່ວມ.

ບັນດາລັດຕ່າງໆ ຄວນສົ່ງເສີມການຄົ້ນຄວ້າ ໃນຫຼາກຫຼາຍອານາຈັກ, ໃນສະພາບການຂອງການພົວພັນກັບບົດບາດ ຍິງ-ຊາຍ ແນໃສ່ ແຈ້ງໃຫ້ຊາບ ກ່ຽວກັບຍຸດທະສາດ ທີ່ຈະຮັບປະກັນຜົນປະໂຫຍດທີ່ເປັນທຳ ສຳລັບຜູ້ຊາຍ ແລະ ແມ່ຍິງ ໃນການປະມົງ. ດ້ວຍການຮັບຮູ້ບົດບາດຂອງການປະມົງຂະໜາດນ້ອຍ, ແລະ ເພື່ອເພີ່ມການປູກຈິດສຳນຶກ ກ່ຽວກັບຜົນປະໂຫຍດດ້ານໂພຊະນາການ ໃນການກິນປາ, ບັນດາລັດຕ່າງໆ ຄວນສົ່ງເສີມການບໍລິໂພກປາພາຍໃນແຜນງານການສຶກສາຜູ້ບໍລິໂພກ.

## 12. ການພັດທະນາຂີດຄວາມສາມາດ

ຄວນມີການເພີ້ມຂີດຄວາມສາມາດ ໃນການປະກອບສ່ວນເຂົ້າໃນຂະບວນການຕັດສິນບັນຫາ.

ບັນດາລັດຕ່າງໆ ຄວນສະໜອງການສ້າງຂີດຄວາມສາມາດ ສໍາລັບການປະມົງຂະໜາດນ້ອຍ ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກກາລະໂອກາດຂອງຕະຫຼາດ.

ການພັດທະນາຂີດຄວາມສາມາດ ຄວນເປັນຂະບວນການສອງວິທີ. ຄວາມຮູ້ ແລະ ຄວາມສາມາດ ຄວນຖືກພັດທະນາ ເພື່ອສະໜັບສະໜູນການພັດທະນາແບບຍືນຍົງ ແລະ ການຈັດການບໍລິຫານຮ່ວມກັນທີ່ປະສົບຜົນສໍາເລັດ.



## 13. ການສະໜັບສະໜູນການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ

ທຸກພາກສ່ວນ ໄດ້ຮັບການຊຸກຍູ້ ໃຫ້ຈັດຕັ້ງປະຕິບັດຄໍາແນະນໍາ SSF.

ສະຫະປະຊາຊາດ ແລະ ອົງກອນສະເພາະ ຂອງສະຫະປະຊາຊາດ ຄວນສະໜັບສະໜູນ ຄວາມພະຍາຍາມແບບສະໝັກໃຈ ຂອງບັນດາລັດຕ່າງໆ ໃນການຈັດຕັ້ງປະຕິບັດຄໍາແນະ ນໍາເຫຼົ່ານີ້.

ບັນດາລັດຕ່າງໆ ແລະ ພາກສ່ວນອື່ນໆທັງໝົດ ຕ້ອງເຮັດວຽກຮ່ວມກັນ ເພື່ອປູກຈິດສໍານຶກ ກ່ຽວກັບຄໍາແນະນໍາເຫຼົ່ານີ້, ແລະ ເຜີຍແຜ່ສະບັບທີ່ກະທັດຮັດ ແລະ ທີ່ໄດ້ແປແລ້ວ.

ຄວນມີການຮັບຮູ້ ຄວາມສໍາຄັນຂອງລະບົບຕິດຕາມກວດກາ. ຕົວແທນທາງດ້ານກົດໝາຍ ຂອງຊຸມຊົນຫາປາຂະໜາດນ້ອຍ ຄວນມີສ່ວນຮ່ວມທັງໃນການພັດທະນາ ແລະ ການປະຕິບັດຍຸດທະສາດໃນການຈັດຕັ້ງປະຕິບັດຄໍາແນະນໍາສະບັບເຫຼົ່ານີ້ ແລະ ໃນການຕິດຕາມກວດກາດ້ວຍ.

ອົງການ FAO ຄວນສົ່ງເສີມ ແລະ ສະໜັບສະໜູນ ການພັດທະນາແຜນງານຊ່ວຍເຫຼືອໃນທົ່ວໂລກ.





ເນື້ອໃນທັງໝົດຂອງຄຳແນະນຳແບບສະໝັກໃຈ ສຳລັບການຮັກສາການປະມົງຂະໜາດນ້ອຍໃຫ້ຍືນຍົງ ໃນສະພາບການແຫ່ງການຮັບປະກັນສະບຽງອາຫານ ແລະ ການລຶບລ້າງຄວາມທຸກຍາກ, ມີໃນ:
http://www.fao.org/fishery/topic/18240/en



International Collective in Support of Fishworkers
(ICSF)/ກຸ່ມສາກົນ ໃນການສະໜັບສະໜູນຊາວປະມົງ
27 College Road, Chennai 600 006, India

ISBN 978 93 80802 46 6